ກະຊວງວິທະຍາສາດແລະເຕັກໂນໂລຊີ
ສຳນັກງານ
ເລກທີ 0743 ກວຕ
ລົງວັນທີ 22 APR 2013
ເວລາ 1324
ລົງເຊັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 137/ລບ

ນະຄອນຫຼວງວຽງຈັນ, ວັນທີ 18.4.2014

# ດຳລັດ
# ວ່າດ້ວຍຄົນພິການ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍແຮງງານ ສະບັບປັບປຸງ ເລກທີ 06/ສພຊ, ລົງວັນທີ 27 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍການອະນາໄມ, ກັນພະຍາດ ແລະສົ່ງເສີມສຸຂະພາບ ສະບັບເລກທີ 08/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມກົດໝາຍວ່າດ້ວຍການປິ່ນປົວ ສະບັບເລກທີ 09/ສພຊ,ລົງວັນທີ 09 ພະຈິກ 2005;
- ອີງຕາມກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ ເລກທີ 04/ ສພຊ, ລົງວັນທີ 3 ກໍລະກົດ 2007;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 0505/ຣສສ, ລົງວັນທີ 24 ກຸມພາ 2014.

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການໃນການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງຄົນພິການ ເພື່ອເຮັດໃຫ້ຄົນພິການໄດ້ຮັບການກັນພະຍາດ, ສົ່ງເສີມສຸຂະພາບ, ການປິ່ນປົວ, ການຟື້ນຟູສຸຂະພາບ, ການສຶກສາ, ການຝຶກອົບຮົມວິຊາຊີບ, ການມີອາຊີບທີ່ໝັ້ນຄົງ, ການເຂົ້າເຖິງຂໍ້ມູນຂ່າວສານ, ແຫຼ່ງທຶນ, ສະຖານທີ່ບໍລິການ ແລະການຈັດຕັ້ງຂອງຄົນພິການ, ແນໃສ່ລົບລ້າງທຸກຮູບການຈຳແນກຕໍ່ຄົນພິການ, ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ຮັບການພັດທະນາຕົນເອງ, ເພິ່ງຕົນເອງ ແລະສາມາດເຂົ້າຮ່ວມກິດຈະກຳຕ່າງໆໃນສັງຄົມ.

## ມາດຕາ 2 ຄົນພິການ

ຄົນພິການ ແມ່ນຜູ້ມີຄວາມບົກຜ່ອງ ຫຼືສູນເສຍໜ້າທີ່ການຂອງອະໄວຍະວະ ແລະ ອົງຄະສ່ວນໃດໜຶ່ງຂອງຮ່າງກາຍ, ຈິດໃຈ, ມັນສະໝອງ, ສະຕິປັນຍາ ລວມທັງການເບິ່ງເຫັນ, ການໄດ້ຍິນ ແລະການປາກເວົ້າ ໂດຍບໍ່ຈຳແນກສາຍເຫດຂອງຄວາມເປັນພິການ, ຊຶ່ງຄວາມເປັນພິການນັ້ນ ໄດ້ເປັນອຸປະສັກໃນການເຄື່ອນໄຫວກິດຈະກຳປະຈຳວັນ ແລະການເຂົ້າຮ່ວມກິດຈະກຳທາງສັງຄົມຢ່າງເຕັມສ່ວນ.

## ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ພິການ ໝາຍເຖິງ ຄວາມບົກຜ່ອງ ຫຼືການສູນເສຍໜ້າທີ່ການຂອງອະໄວຍະວະ ຫຼືອົງຄະຂອງຮ່າງກາຍ, ຈິດໃຈ, ມັນສະໝອງ, ສະຕິປັນຍາ, ການເບິ່ງ, ການໄດ້ຍິນ ແລະການປາກເວົ້າ;
2. ການຈຳແນກຄວາມເປັນພິການ ໝາຍເຖິງ ທຸກການປະພຶດທີ່ມີລັກສະນະລັງກຽດ, ສຽດສີ, ເຍາະເຍີ້ຍ, ກີດກັ້ນ, ຈຳກັດ ແລະປະຕິເສດຕໍ່ຄົນພິການ;
3. ການສ້າງສິ່ງອຳນວຍຄວາມສະດວກ ໝາຍເຖິງ ການສ້າງ ແລະປັບປຸງສະພາບແວດລ້ອມ ເຊັ່ນ ຕຶກ, ອາຄານ, ຖະໜົນ, ຫົນທາງ ແລະສະຖານທີ່ບໍລິການຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ຄົນພິການ;
4. ເຄື່ອງຄ້ຳຊູ ໝາຍເຖິງ ອຸປະກອນທີ່ນຳໃຊ້ສຳລັບການເຄື່ອນໄຫວກິດຈະກຳຕ່າງໆ ແລະການດຳລົງຊີວິດຂອງຄົນພິການ ເຊັ່ນ ອົງຄະທຽມ, ຫຼາບຂາທຽມ, ໄມ້ຄ້ອນເທົ້າ, ໄມ້ຄ້ຳເທົ້າ ແລະອື່ນໆ;
5. ເຄື່ອງຊ່ວຍຊູ ໝາຍເຖິງ ອຸປະກອນທີ່ນຳໃຊ້ສຳລັບການເຄື່ອນໄຫວກິດຈະກຳຕ່າງໆ ແລະການດຳລົງຊີວິດຂອງຄົນພິການ ເຊັ່ນ ລໍ້ເລື່ອນ, ລໍ້ໂຍກ, ຫຼາບເລົາຄີງ ແລະອື່ນໆ;
6. ສະຖານທີ່ສາທາລະນະ ໝາຍເຖິງ ສະຖານທີ່ຕ່າງໆ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ວັດ, ສວນສາທາລະນະ, ແຫຼ່ງທ່ອງທ່ຽວ, ສະໜາມກິລາ, ສະໜາມບິນ, ທ່າເຮືອ, ຕະຫຼາດ, ສະຖານີຈອດລົດ, ປ້ຳນ້ຳມັນ, ສະຖານທີ່ຈັດງານ, ທະນາຄານ ແລະອື່ນໆ.

## ມາດຕາ 4 ນະໂຍບາຍຂອງລັດ ຕໍ່ຄົນພິການ

ລັດ ສົ່ງເສີມສິດທິອັນຊອບທຳຂອງຄົນພິການ ດ້ວຍການສ້າງເງື່ອນໄຂໃຫ້ຄົນພິການ ໄດ້ຮັບການຊ່ວຍເຫຼືອ, ເບິ່ງແຍງລ້ຽງດູ, ປິ່ນປົວ, ຟື້ນຟູສຸຂະພາບ, ການສຶກສາ, ການຝຶກວິຊາຊີບ, ການມີວຽກເຮັດງານທຳ, ການເຂົ້າເຖິງສະຖານທີ່ສາທາລະນະ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ແຫຼ່ງທຶນ ເພື່ອພັດທະນາຕົນເອງ ແລະກຸ່ມຕົນເອງ.

ລັດ ຊຸກຍູ້ ແລະສົ່ງເສີມໃຫ້ມີການສ້າງຕັ້ງ ສະມາຄົມຄົນພິການ, ມູນນິທິ ແລະກອງທຶນພັດທະນາຄົນພິການ, ສຶກສາອົບຮົມ ແລະປູກຈິດສຳນຶກໃຫ້ປວງຊົນເຂົ້າໃຈ, ເມດຕາ, ຊ່ວຍເຫຼືອ, ປົກປ້ອງສິດທິຂອງຄົນພິການ ລວມທັງການປ້ອງກັນຄວາມເປັນພິການ.

ລັດ ຊຸກຍູ້ ແລະສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງສັງຄົມ ທັງພາຍໃນ ແລະຕ່າງປະເທດ ປະກອບສ່ວນທາງດ້ານທຶນຮອນ, ເຕັກນິກວິຊາການ ເຂົ້າໃນການພັດທະນາຄົນພິການ.

ລັດ ນຳໃຊ້ມາດຕະການທີ່ຈຳເປັນເພື່ອປົກປ້ອງ ແລະສະກັດກັ້ນທຸກຮູບການຈຳແນກ, ສຽດສີ, ເຍາະເຍີ້ຍ, ການໃຊ້ຄວາມຮຸນແຮງ, ການລ່ວງລະເມີດທາງດ້ານຮ່າງກາຍ, ເພດ, ຈິດໃຈ, ກຽດສັກສີ ແລະການສະແຫວງຫາຜົນປະໂຫຍດ ຈາກຄົນພິການ.

### ມາດຕາ 5 ຫຼັກການລວມ

1. ຮັບປະກັນສິດສະເໝີພາບດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ລະຫວ່າງ ຄົນພິການ ແລະ ຄົນບໍ່ພິການ;
2. ຮັບປະກັນບໍ່ໃຫ້ມີການຈຳແນກ, ສຽດສີ, ເຍາະເຍີ້ຍ, ການໃຊ້ຄວາມຮຸນແຮງ, ການລ່ວງລະເມີດທາງດ້ານຮ່າງກາຍ, ເພດ, ຈິດໃຈ, ກຽດສັກສີ ແລະການສະແຫວງຫາຜົນປະໂຫຍດຈາກຄົນພິການ;
3. ຮັບປະກັນການຄຸ້ມຄອງ ແລະຈັດຕັ້ງປະຕິບັດນະໂຍບາຍຕໍ່ຄົນພິການ ເປັນເອກະພາບກັນທົ່ວປະເທດ;
4. ຮັບປະກັນສິ່ງອຳນວຍຄວາມສະດວກ ເພື່ອເຂົ້າເຖິງການບໍລິການ, ສະຖານທີ່ສາທາລະນະ, ຂໍ້ມູນຂ່າວສານ ແລະການຄົມມະນາຄົມ;
5. ສົ່ງເສີມການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ເຂົ້າໃນການປົກປ້ອງ, ຊ່ວຍເຫຼືອ ແລະພັດທະນາຄົນພິການ;
6. ສົ່ງເສີມການຮ່ວມມືສາກົນ, ພາກພື້ນ ເພື່ອປະຕິບັດພັນທະລັດພາຄີ ແລະເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກ, ວິຊາການ ແລະທຶນຮອນເຂົ້າໃນການພັດທະນາຄົນພິການ.

### ມາດຕາ 6 ພັນທະຂອງຄົນພິການ

ຄົນພິການ ມີພັນທະເຄົາລົບ ແລະປະຕິບັດລັດຖະທຳມະນູນ, ກົດໝາຍ ແລະປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ - ສັງຄົມ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕາມຄວາມຮູ້, ຄວາມສາມາດ ແລະເງື່ອນໄຂຕົວຈິງ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະຮ່ວມມືກັບສາກົນ ກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງຄົນພິການ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຍາດແຍ່ງການຊ່ວຍເຫຼືອທຶນຮອນ ແລະ ເຕັກນິກວິຊາການເພື່ອພັດທະນາຄົນພິການ, ປະຕິບັດສົນທິສັນຍາ ແລະສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 8 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບຄົນພິການທຸກເພດ, ໄວ ທີ່ເປັນພົນລະເມືອງລາວ ໂດຍບໍ່ຈຳແນກຄວາມເປັນພິການ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງລັດ, ອົງການຈັດຕັ້ງຂອງສັງຄົມ ທີ່ເຄື່ອນໄຫວວຽກງານກ່ຽວກັບຄົນພິການ ຢູ່ ສປປ ລາວ.